**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0343 /ອຄ.ກພຮ

ນະຄອນຫຼວງວຽງຈັນ, ວັນທີ 07 ພຶດສະພາ 2021

# ບົດລາຍງານ

**ຮຽນ**: ທ່ານ ຫົວໜ້າກອງເລຂາຄະນະສະເພາະກິດດ້ານເສດຖະກິດ ທີ່ນັບຖື.

**ເລື່ອງ**: ລາຍງານບັນດານະໂຍບາຍ ແລະ ມາດຕະການຂອງຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອແກ້ໄຂຜົນກະທົບຂອງການລະບາດຂອງພະຍາດໂຄວິດ-19 ຕໍ່ເສດຖະກິດ ພາຍຫຼັງຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021

- ອີງຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0309/ອຄ.ຈພງ, ລົງວັນທີ 22 ເມສາ 2021;
- ອີງຕາມໜັງສືຂອງຄະນະສະເພາະກິດດ້ານເສດຖະກິດ ສະບັບເລກທີ 026/ສພກ, ລົງວັນທີ 29 ເມສາ 2021.

ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ພາຍຫຼັງຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ໂດຍຜ່ານການຈັດຕັ້ງປະຕິບັດນັບຕັ້ງແຕ່ເລີ່ມມີຄຳສັ່ງດັ່ງກ່າວມາຮອດປັດຈຸບັນ, ກະຊວງ ອຄ ແມ່ນສາມາດສະຫຼຸບສັງລວມໄດ້ໂດຍຫຍໍ້ກ່ຽວກັບ ທິດທາງມາດຕະການໃນຕໍ່ໜ້າຄືດັ່ງລຸ່ມນີ້:

## 1. ວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ໂດຍສະເພາະການນຳເຂົ້າ ແລະ ສົ່ງອອກ ລວມເຖິງການເຄື່ອນຍ້າຍສິນຄ້າພາຍໃນປະເທດ:

1) ສະເໜີຂະແໜງການທີ່ກ່ຽວຂ້ອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ (ແຂວງ, ເມືອງ) ເພີ່ມທະວີການຈັດຕັ້ງປະຕິບັດ ຄຳສັ່ງ ເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການ ເລກທີ 406/ຫສນຍ, ລົງວັນທີ 26 ເມສາ 2021, ແຈ້ງການ ເລກທີ 242/ຍທຂ, ລົງວັນທີ 23 ເມສາ 2021 ແລະ ນິຕິກຳທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກສິນຄ້າ, ການເຄື່ອນຍ້າຍສິນຄ້າພາຍໃນ, ລົດຂົນສົ່ງສິນຄ້າ ແລະ ຄົນຂັບລົດຂົນສົ່ງສິນຄ້າ ໂດຍການຫຼຸດຜ່ອນຂັ້ນຕອນ ແລະ ເວລາ ໃນການນຳເຂົ້າ-ສົ່ງອອກສິນຄ້າ ຢູ່ບັນດາດ່ານສາກົນ ແລະ ແກ້ໄຂບັນຫາການຕັ້ງຈຸດກວດກາຕາມເສັ້ນທາງຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ການເຄື່ອນຍ້າຍສິນຄ້າພາຍໃນ (ເມືອງ ຫາ ເມືອງ, ແຂວງ ຫາ ແຂວງ). ເນື່ອງຈາກວ່າ ຍັງບໍ່ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດມາດຕະການຕໍ່ກັບການຂົນສົ່ງສິນຄ້າ ໃນຂອບເຂດທົ່ວປະເທດ ໂດຍສະເພາະຢູ່ບາງແຂວງ, ເມືອງ ໄດ້ອອກນິຕິກຳຕ່າງຫາກ ທີ່ບໍ່ທັນສອດຄ່ອງກັບນິຕິກຳທີ່ຂັ້ນສູນກາງວາງອອກ.

2) ສະເໜີສືບຕໍ່ໃຫ້ນະໂຍບາຍຍົກເວັ້ນພາສີ-ອາກອນ ແລະ ຄ່າທຳນຽມຕ່າງໆ ສຳລັບການນຳເຂົ້າສິນຄ້າທີ່ມາຮັບໃຊ້ວຽກງານປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ທີ່ມີຄຸນນະພາບ ແລະ ບໍ່ສາມາດຜະລິດໄດ້ຢູ່ພາຍໃນ ເຊັ່ນ: ຜ້າປິດປາກ-ດັງ, ນ້ຳຢາລ້າງມື, ອຸປະກອນການແພດ ແລະ ອື່ນໆທີ່ຈຳເປັນ. ພ້ອມດຽວກັນ, ສະເໜີຄົ້ນຄວ້າໃຫ້ນະໂຍບາຍທາງດ້ານອາກອນ ແລະ ຄ່າທຳນຽມຕ່າງໆ ເພີ່ມເຕີມສຳລັບການຈຳໜ່າຍອຸປະກອນການແພດຕ່າງໆ ຂອງອົງການຈັດຕັ້ງ ຫຼື ບໍລິສັດ ທີ່ບໍ່ໄດ້ຫວັງຜົນກຳໄລພາຍຫຼັງການນຳເຂົ້າ.

3) ສະເໜີກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາແກ້ໄຂບັນຫາການຂົນສົ່ງສິນຄ້າ ດັ່ງນີ້:

- ຄວບຄຸມລາຄາຂົນສົ່ງ ໂດຍບໍ່ໃຫ້ຜູ້ປະກອບການຂົນສົ່ງພາຍໃນ ສວຍໂອກາດຂຶ້ນລາຄາຄ່າຂົນສົ່ງສູງ ເກີນໄປ ໃນກໍລະນີທີ່ມີການຄ່ຽນຖ່າຍລົດຂົນສົ່ງສິນຄ້າ ຫຼື ປ່ຽນຄົນຂັບລົດຕ່າງປະເທດ ມາເປັນລົດຂົນສົ່ງ ສິນຄ້າ ຫຼື ຄົນຂັບລົດ ຢູ່ ສປປ ລາວ.
- ຖ້າຜູ້ປະກອບການ ແລະ ຄົນຂັບລົດຕ່າງປະເທດ ສາມາດປະຕິບັດຕາມເງື່ອນໄຂຕ່າງໆຕາມຂໍ້ 5.3 ຂອງແຈ້ງການເລກທີ 242/ຍທຂ ແລ້ວ, ສະເໜີອະນຸຍາດໃຫ້ລົດຂົນສົ່ງສິນຄ້າ ຫຼື ຄົນຂັບລົດຕ່າງປະເທດ ສາມາດຂົນສົ່ງສິນຄ້າຮອດປາຍທາງໄດ້ເລີຍ ໂດຍບໍ່ຈຳແນກປະເພດຂອງສິນຄ້າ.
- ສະເໜີສົມທົບກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງປະຈຳດ່ານ ເພື່ອເປີດກວ້າງການຮັບຮູ້ໃບຢັ້ງຢືນການກວດຫາເຊື້ອພະຍາດໂຄວິດ-19 ຂອງຄົນຂັບລົດຕ່າງປະເທດທີ່ເຂົ້າມາ ສປປ ລາວ ຈາກສະຖາບັນອື່ນທີ່ໄດ້ຮັບອະນຸຍາດ ແລະ ມີມາດຖານຄົບຖ້ວນ (ພາກເອກະຊົນ) ນອກເໜືອຈາກສະຖາບັນຂອງລັດທີ່ກ່ຽວຂ້ອງ.

4) ສະເໜີກະຊວງປ້ອງກັນຄວາມສະຫງົບ ຄົ້ນຄວ້າອອກແຈ້ງການ ຫາ ກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ ເພື່ອແກ້ໄຂບັນຫາການຕັ້ງຈຸດກວດກາຕາມເສັ້ນທາງ ຂອງເຈົ້າໜ້າທີ່ຕຳຫຼວດ ທີ່ສ້າງຄວາມຫຍຸ້ງຍາກໃຫ້ແກ່ການຂົນສົ່ງສິນຄ້າພາຍໃນປະເທດ (ເມືອງ ຫາ ເມືອງ, ແຂວງ ຫາ ແຂວງ).

5) ສະເໜີກະຊວງສາທາລະນະສຸກ (ກົມອາຫານ ແລະ ຢາ), ກະຊວງການເງິນ (ກົມພາສີ) ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອປັບປຸງຂັ້ນຕອນ ແລະ ເວລາ ການນຳເຂົ້າສິນຄ້າທີ່ມາຮັບໃຊ້ວຽກງານປ້ອງກັນ ແລະ ສະກັດກັ້ນການລະບາດຂອງພະຍາດໂຄວິດ-19 ໃຫ້ມີຄວາມກະທັດຮັດ ແລະ ວ່ອງໄວ ເພື່ອໃຫ້ສາມາດຈຳໜ່າຍໄດ້ທັນກັບສະພາບການ.

6) ສະເໜີກະຊວງກະສິກຳ ແລະ ປ່າໄມ້ ເຜີຍແຜ່ບັນດາຂໍ້ມູນ ແລະ ມາດຕະການຕ່າງໆ ໃນການສົ່ງອອກສິນຄ້າກະສິກຳ ທີ່ປະເທດປາຍທາງເປັນຜູ້ກຳນົດ ໃຫ້ແກ່ຜູ້ສົ່ງອອກລາວ ໃຫ້ສາມາດປະຕິບັດໄດ້ ແນໃສ່ຫຼີກລ້ຽງການຖືກປະຕິເສດນຳເຂົ້າ ໃນເວລາສິນຄ້າຮອດດ່ານຂອງປະເທດປາຍທາງ.

7) ສະເໜີບັນດາແຂວງ, ດ່ານຊາຍແດນສາກົນ ແລະ ຂະແໜງການທີ່ກ່ຽວຂ້ອງ ສົມທົບກັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກສິນຄ້າກະສິກຳຂອງລາວ ໄປຕ່າງປະເທດ ເປັນຕົ້ນ ການຂະຫຍາຍເວລາເປີດບໍລິການຢູ່ດ່ານ. ໃນນີ້, ແມ່ນສະເໜີສຸມໃສ່ອຳນວຍຄວາມສະດວກໃຫ້ແກ່ການສົ່ງອອກຜ່ານດ່ານບໍ່ເຕັນ-ບໍ່ຫານ ໄປ ສປ ຈີນ ເນື່ອງຈາກຝ່າຍຈີນ ໄດ້ເພີ່ມຄວາມເຂັ້ມງວດໃນການກວດຫາເຊື້ອພະຍາດໂຄວິດ-19 ນຳສິນຄ້າ, ລົດຂົນສົ່ງສິນຄ້າ ແລະ ຄົນຂັບລົດຂົນສົ່ງສິນຄ້າ ຊຶ່ງເປັນສາເຫດໃຫ້ມີຄວາມແອອັດ ແລະ ລົດຄ້າງຢູ່ດ່ານດັ່ງກ່າວ ເປັນຈຳນວນຫຼາຍ.

8) ສະເໜີໃຫ້ມີນິຕິກຳຄຸ້ມຄອງການຜ່ານແດນສິນຄ້າ ເພື່ອຫຼຸດຜ່ອນຄວາມແອອັດຂອງສິນຄ້າ, ລົດຂົນສົ່ງສິນຄ້າ ແລະ ຄົນຂັບລົດຕ່າງປະເທດ ຢູ່ດ່ານທີ່ມີການນຳເຂົ້າ-ສົ່ງອອກ ແລະ ຜ່ານແດນສິນຄ້າ ເປັນຈຳນວນຫຼາຍ ໃນໄລຍະທີ່ມີການລະບາດຂອງພະຍາດໂຄວິດ-19 ຮອບໃໝ່.

9) ສະເໜີໃຫ້ມີການສ້າງຕັ້ງໜ່ວຍງານສາຍດ່ວນ ເພື່ອໃຫ້ນັກທຸລະກິດໄດ້ລາຍງານ ແລະ ປຶກສາຂັ້ນເທິງ ເພື່ອໃຫ້ຂອດການແກ້ໄຂບັນຫາ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆໄວຂຶ້ນ.

10) ສະເໜີໃຫ້ແກ້ໄຂກໍລະນີ ການຂົນສົ່ງລະຫວ່າງປະເທດ ຖ້າຜູ້ປະກອບການ ແລະ ຜູ້ຂັບລົດ ຫາກປະຕິບັດຕາມເງື່ອນໄຂໃນຂໍ້ 5.3 (ແຈ້ງການເລກທີ 242/ຍທຂ) ແລ້ວ ເຫັນວ່າທຸກສິດຄ້າ ກໍ່ບໍ່ຈຳເປັນຕ້ອງຈຳກັດ ແລະ ມີການຄ່ຽນຖ່າຍສິນຄ້າ ສາມາດຂົນສົ່ງສິນຄ້າໄປຫາປາຍທາງ ຕາມທີ່ຜູ້ຊື້ ແລະ ຜູ້ຂາຍໄດ້ຕົກລົງກັນ.

## 2. ວຽກງານການຄ້າ:

1) ໃນກໍລະນີສະພາບການແຜ່ລະບາດຍັງຮ້າຍແຮງ, ແກ່ຍາວ ຈະໄດ້ເຂັ້ມງວດມາດຕະການຂຶ້ນຕື່ມຕາມແຈ້ງການ ສະບັບເລກທີ 0307/ອຄ.ກຄພນ, ລົງວັນທີ 22 ເມສາ 2021 ຊຶ່ງຈະເພີ່ມບາງມາດຕະການ ເຊັ່ນ:

- ຫ້າມຂາຍສິນຄ້າ ປະເພດ ເຫຼົ້າ, ເບຍ ແລະ ເຄື່ອງດື່ມທີ່ມີທາດເຫຼົ້າທຸກປະເພດ ໃນໄລຍະການຍົກລະດັບມາດຕະການໃນການຄຸ້ມຄອງທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ;
- ປິດບໍລິການຊົ່ວຄາວກິດຈະການ ສູນການຄ້າ, ຮ້ານຄ້າຂາຍຍົກ ແລະ ຮ້ານຄ້າຂາຍຍ່ອຍທີ່ຂາຍສິນຄ້າທົ່ວໄປຢູ່ໃນ ຫຼື ນອກຕະຫຼາດ ເປັນຕົ້ນ: ຮ້ານຂາຍເສື້ອຜ້າ, ເຄື່ອງນຸ່ງຫົ່ມ, ເກີບ, ກະເປົາ, ເຄື່ອງໃຊ້ໄຟຟ້າ, ເຄື່ອງກໍ່ສ້າງ, ເຄື່ອງຫັດຖະກຳ ແລະ ອື່ນໆທີ່ບໍ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ;
- ອະນຸຍາດດຳເນີນກິດຈະການຮ້ານສັບພະສິນຄ້າ, ຮ້ານຊຸບເປີ້ມາເກັດ, ຕະຫຼາດສົດ, ຕະຫຼາດຂາຍເຄື່ອງກະສິກຳ ແລະ ຕະຫຼາດທີ່ຂາຍສິນຄ້າປະເພດສະບຽງອາຫານ, ຮ້ານສະດວກຊື້, ຮ້ານຂາຍອຸປະກອນການແພດ, ຮ້ານຂາຍຢາ, ປໍ້ານໍ້າມັນເຊື້ອໄຟ ແລະ ຮ້ານຈຳໜ່າຍອາຍແກັດຫຸງຕົ້ມ ແຕ່ໃຫ້ປະຕິບັດມາດຕະການປ້ອງກັນຂອງຄະນະສະເພາະກິດວາງອອກຢ່າງເຂັ້ມງວດ;
- ກຳນົດຄືນເວລາ ເປີດ-ປິດ ໃຫ້ບັນດາຕະຫຼາດ ແລະ ຮ້ານຄ້າ ບໍ່ໃຫ້ກາຍ 20:00 ໂມງ.

ກໍລະນີການແຜ່ລະບາດຫຼຸດລົງ ແລະ ມີຄຳສັ່ງ ຫຼື ແຈ້ງການຂອງຂັ້ນເທິງໃຫ້ຜ່ອນຜັນ ແມ່ນຈະໄດ້ສືບຕໍ່ຈັດຕັ້ງປະຕິບັດແຈ້ງການ 0307/ອຄ.ກຄພນ, ລົງວັນທີ 22 ເມສາ 2021 ແຕ່ຈະຜ່ອນຜັນການອະນຸຍາດເປີດບາງກິດຈະການ ແລະ ການຂາຍບາງລາຍການສິນຄ້າທີ່ໄດ້ຫ້າມນັ້ນ ຕາມຄວາມເປັນຈິງ;

2) ເພື່ອຮັບປະກັນການສະໜອງສິນຄ້າປະເພດສະບຽງອາຫານ, ສິນຄ້າບໍລິໂພກທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ, ຈະໄດ້ສືບຕໍ່ປະສານກັບບັນດາບໍລິສັດນຳເຂົ້າສິນຄ້າປະເພດສະບຽງອາຫານ ເພື່ອກະກຽມການສະໜອງສິນຄ້າໃຫ້ພຽງພໍຕໍ່ຄວາມຕ້ອງການ ການຊົມໃຊ້ ລະສາມາດຮັບປະກັນມີແຮໄວ້ 2 ເດືອນ. ພ້ອມກັນນັ້ນ ຕ້ອງໄດ້ປະສານສົມທົບກັບບັນດາບໍລິສັດນຳເຂົ້າອຸປະກອນການແພດ, ຢາປົວພະຍາດ (ໂດຍສະເພາະທີ່ຕິດພັນການປ້ອງກັນການແຜ່ລະບາດໂຄວິດ 19) ແລະ ຂະແໜງການກ່ຽວຂ້ອງ ພ້ອມທັງບັນດາໂຮງງານຜະລິດຜ້າປິດປາກ-ດັງ ເພື່ອໃຫ້ມີການຜະລິດ, ແລະນຳເຂົ້າມາເພື່ອສະໜອງໃຫ້ສັງຄົມໄດ້ຮັບໃຊ້ພຽງພໍ, ມີຄຸນນະພາບຕາມການຮັບຮອງຂອງກະຊວງສາທາ ລະນະສຸກ ແລະ ມີລາຄາທີ່ເຫມາະສົມ.

3) ດ້ານວຽກງານຄຸ້ມຄອງສິນຄ້າ ແລະ ລາຄາ, ສືບຕໍ່ ສົມທົບກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ/ນະຄອນຫຼວງ ໃນທົ່ວປະເທດ ລົງຕິດຕາມກວດກາສິນຄ້າ ແລະ ລາຄາ, ການສະໜອງສິນຄ້າ ຕາມຮ້ານຄ້າ ແລະ ໃນຕະຫຼາດຕ່າງໆ.

4) ສືບຕໍ່ຄົ້ນຄວ້ານິຕິກຳ ໃນກໍລະນີເຂັ້ມງວດຂຶ້ນ ຫຼື ຜ່ອນຜັນ ຕາມແຕ່ລະໄລຍະ ທີ່ຄະນະສະເພາະກິດຂັ້ນສູນກາງວາງອອກ;

## 3. ວຽກງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ:

### 1.1 <u>ນະໂຍບາຍ</u>:

1) ຊຸກຍູ້ ແລະ ສົ່ງເສີມໃຫ້ໂຮງງານຜະລິດຜ້າອັດປາກອັດດັງ ແລະ ອຸປະກອນຈຳເປັນທາງການແພດອື່ນໆ ສືບຕໍ່ດຳເນີນການຜະລິດຢ່າງເປັນປົກກະຕິ ເພື່ອຮັບປະກັນໃຫ້ສາມາດຕອບສະໜອງສິນຄ້າທີມີຄຸນນະພາບໄດ້ມາດ ຕະຖານ ແລະ ປະລິມານຕາມຄວາມຕ້ອງການຂອງສັງຄົມຢ່າງພຽງພໍ.

2) ຊຸກຍູ້ ແລະ ຕິດຕາມຢ່າງໃກ້ຊິດໂຮງງານທີ່ຖືກສັ່ງປິດ (ຕັດຫຍິບ ແລະ ເກີບ) ພ້ອມທັງແນະນຳ ຫຼື ມີແນວທາງ ແລະ ມາດຕະການປ້ອງກັນການແຜ່ລະບາດພະຍາດໂຄວິດ-19 ເພື່ອໃຫ້ສາມາດອະນຸຍາດດຳເນີນກິດຈະ ການ (ມີການປິດໜ້ອຍທີ່ສຸດ) ແລະ ໃຫ້ມີການປະຕິບັດຢ່າງເຂັ້ມງວດຕາມເງື່ອນໄຂຂອງຄະນະສະເພາະກິດໄດ້ວາງອອກເຊັ່ນ: ການຮັກສາໄລຍະຫ່າງ, ບ່ອນເຮັດວຽກມີຈຸດກວດກາອຸດຫະພູມ, ມີບ່ອນລ້າງມື ຫຼື ເຈວລ້າງມື, ມີຜ້າອັດປາກດັງ, ມີການບັນທຶກການເຂົ້າອອກພາຍໃນໂຮງງານ...

3) ຊ່ວຍພາກທຸລະກິດ ໂດຍສະເພາະຜູ້ທີ່ຖືກສັ່ງປິດ ທີ່ມີຄວາມຈຳເປັນ ເປັນຕົ້ນ ການອອກໜັງສືຢັ້ງຢືນໃຫ້ ໃນກໍລະນີເກີດມີການຜະລິດທີ່ບໍ່ທັນຕາມກຳນົດການສັ່ງຊື້ຂອງລູກຄ້າ ແລະ ອື່ນໆ ເພື່ອຊ່ວຍບໍ່ໃຫ້ມີການປັບໄໝ ເພາະເປັນເຫດສຸກເສີນຍ້ອນການລະບາດຂອງພະຍາດໂຄວິດ-19.

4) ຄົ້ນຄວ້າກົນໄກຫຼຸດຜ່ອນຂອດຂັ້ນ ຫຼື ເຮັດໃຫ້ມີຄວາມສະດວກ ໃນການຂໍອະນຸຍາດສ້າງຕັ້ງໂຮງງານ, ການຂົນສົ່ງວັດຖຸດິບ ແລະ ສິນຄ້າ ໂດຍສະເພາະອຸດສາຫະກຳຜະລິດອຸປະກອນການແພດ, ເຄື່ອງມື, ເຄື່ອງປ້ອງກັນໂຄວິດ ແລະ ສະບຽງອາຫານ ແລະ ອຸປະກອນຮັບໃຊ້ການຜະລິດກະສິກຳ ແລະ ອື່ນໆ.

### 1.2 <u>ມາດຕະການ</u>:

1) ອອກແຈ້ງການ ແລະ ລົງຕິດຕາມໃກ້ຊິດ ຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດປະຕິບັດຕາມມາດຕະການ ແລະ ເງື່ອນໄຂ ທີ່ຄະນະສະເພາະກິດໄດ້ກຳນົດໄວ້ ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ພາຍໃນໂງງານອຸດສາຫະກຳ.

2) ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການລະບາດ ຂອງພະຍາດໂຄວິດ-19 ຢູ່ບັນດາໂຮງງານອຸດສາຫະກ□າປຸງແຕ່ງ ແລະ ຫັດຖະກຳ ຢູ່ບັນດາແຂວງ/ນະຄອນຫຼວງ ລວມທັງໂຮງງານທີ່ຢູ່ໃນເຂດນິຄົມອຸດສາຫະກຳ, ຕາມພາລະບົດບາດ ແລະ ການແບ່ງຂັ້ນຄຸ້ມຄອງ ເພື່ອເຜີຍແຜ່ຂໍ້ມູນສຳຄັນໃນການປ້ອງກັນ ແລະ ຄວບຄຸມພະຍາດໂຄວິດ-19 ໃຫ້ແກ່ພະນັກງານ ແລະ ກຳມະກອນພາຍໃນໂຮງງານໄດ້ຮັບຮູ້ເຂົ້າໃຈ ແລະ ເປັນເຈົ້າການໃນການປ້ອງກັນພະຍາດໂຄວິດ-19 ຮ່ວມກັນ.

3) ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທີ່ມີເງື່ອນໄຂດ້ານເສດຖະກິດ ໃຫ້ຄົ້ນຄວ້າ ແລະ ພິຈາລະນາສືບຕໍ່ຈ້າງແຮງງານຂອງຕົນ ຕາມນະໂຍບາຍ ແລະ ຈຳນວນຢ່າງເໝາະສົມ.

4) ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ນຳພາພະນັກງານ ແລະ ກຳມະກອນ ພາຍໃນໂຮງງານຂອງຕົນ ເຂົ້າສັກຢາວັກແຊັງປ້ອງກັນພະຍາດໂຄວິດ-19.

### 1.3 <u>ຂໍ້ສະເໜີຕິດພັນນະໂຍບາຍ</u>

1) ສະເໜີຄົ້ນຄວ້າ ແລະ ພິຈາລະນາຊ່ວຍເຫຼືອແກ້ໄຂໃຫ້ແຮງງານທີ່ໄດ້ຮັບຜົນກະທົບຈາກການຢຸດເຊົາການຜະລິດຊົ່ວຄາວຂອງໂຮງງານ (ໂດຍສະເພາະແຮງງານລາວ) ໃຫ້ໄດ້ຮັບນະໂຍບາຍຊ່ວຍເຫຼືອດ້ານສະຫວັດການສັງ ຄົມ ຫຼື ເງິນອຸດໜູນຕາມຄວາມເໝາະສົມ ໂດຍສະເພາະແມ່ນຕໍ່ຜູ້ບໍ່ໄດ້ເຮັດວຽກ ຂອງບັນດາໂຮງງານທີ່ຖືກປິດ.

2) ສະເໜີຄົ້ນຄວ້າ ແລະ ພິຈາລະນາເງື່ອນໄຂ ແລະ ມາດຕະຖານ ເປັນຕົ້ນ ການອອກໃບຢັ້ງຢືນການປອດເຊື້ອພະຍາດໂຄວິດ 19-ຂອງບໍລິສັດຂົນສົ່ງ ເພື່ອອຳນວຍຄວາມສະດວກໃນການນຳເຂົ້າວັດຖຸດິບມາຜະລິດປຸງແຕ່ງ ແລະ ສົ່ງອອກຜະລິດຕະພັນ ຂອງໂຮງງານທີ່ມີເງື່ອນໄຂ ແລະ ມາດຕະການປ້ອງກັນພະຍາດຢ່າງເຂັ້ມງວດ.

3) ສະເໜີຕໍ່ເວລາ (ຍືດເວລາ) ການເສຍພັນທະອາກອນຕ່າງໆ ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19.

4) ສະເໜີຄົ້ນຄວ້າ ແລະ ພິຈາລະນາຫຼຸດຜ່ອນລາຄາຊົມໃຊ້ໄຟຟ້າລາວ-ນໍ້າປະປາລາວ ແລະ ອິນເຕີເນັດ ໃນໄລຍະທີ່ຍັງມີການລະບາດຂອງພະຍາດໂຄວິດ-19 ເພື່ອບັນເທົາຜົນກະທົບດ້ານເສດຖະກິດຕໍ່ໂຮງງານອຸດສາຫະກຳປຸງແຕ່ງ ແລະ ໂຮງຊ່າງຫັດຖະກຳ ແລະ ກຳມະກອນໃນຂອບເຂດທົ່ວປະເທດ.

5) ສະເໜີບັນດາສະຖາບັນການເງິນ ແລະ ທະນາຄານພິຈາລະນາຜ່ອນຜັນເລື່ອນຊຳລະດອກເບ້ຍ ແລະ ສະໜອງສິນເຊື່ອໃຫ້ແກ່ພາກອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພື່ອຊຸກຍູ້ພາກການຜະລິດປຸງແຕ່ງພາຍໃນປະເທດ ແລະ ບັນເທົາສະພາບຄ່ອງທາງການເງິນ.

6) ສະເໜີຄົ້ນຄວ້າ ແລະ ພິຈາລະນາ ໃຫ້ຮຸ້ນສ່ວນ ຫຼື ເຈົ້າຂອງໂຮງງານ ຫຼື ວິຊາການຕົ້ນຕໍ ທີ່ຕິດຄ້າງຢູ່ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາ ສປປ ລາວ ເພື່ອມາປັບປຸງແຜນລະບົບການຄຸ້ມຄອງ ແລະ ລະບົບການຜະລິດພາຍໃນໂຮງງານ ບົນພື້ນຖານການປະຕິບັດມາດຕະການປ້ອງກັນໂຄວິດ-19 ທີ່ວາງອອກຢ່າງຮັດກຸມ ແລະ ເຂັ້ມງວດ. (ໝາຍຄວາມວ່າຄວນເປີດໃຫ້ເຂົ້າມາ ແຕ່ມີການກັກຕົວຕາມລະບຽບ)

**4. ວຽກງານສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ:**

1) ຈະສຸມໃສ່ນຳໃຊ້ບ້ວງເງິນອັນຕາດອກເບ້ຍ 3% ທີ່ລັດຖະບານໄດ້ອະນຸມັດໃຫ້ກອງທຶນສົ່ງເສີມ SME 100 ຕື້ກີບທຳອິດ ສຳລັບ ປີ 2021 ໃຫ້ທະນາຄານທຸລະກິດ ເພື່ອປ່ອຍກູ້ໃຫ້ SME ໂດຍໄວ ແລະ ສືບຕໍ່ປະສານຂໍອະນຸມັດເງິນ 100 ຕື້ກີບ ທີສອງ ຂອງປີ 2021.

2) ເລັ່ງລັດນຳໃຊ້ງົບປະມານຈາກບ້ວງກອງທຶນພິເສດຂອງອົງການຜະລິດຕະພາບແຫ່ງຊາດ ເພື່ອຊ່ວຍປະເທດສະມາຊິກຮັບມືກັບຜົນກະທົບຂອງພະຍາດໂຄວິດ-19 ຈ□ານວນ 130.000 ໂດລາສະຫະລັດ, ເຊິ່ງໃນນີ້:

- 90.000 ໂດລາ ຈະໄດ້ນຳໃຊ້ເຂົ້າໃນການຊື້ເຮືອນຮົ່ມໃຫ້ກຸ່ມຜູ້ຜະລິດກະສິກຳຂະໜາດນ້ອຍ ແລະ ກາງ ເພື່ອປູກຜັກເປັນສິນຄ້າ ຈຳນວນ 06 ກຸ່ມ ຢູ່ໃນ 6 ແຂວງ (ອຸດົມໄຊ, ວຽງຈັນ, ໄຊສົມບູນ, ບໍລິຄຳໄຊ, ສາລະວັນ, ແລະ ເຊກອງ).
- 40.000 ໂດລາ ຈະໄດ້ນຳໃຊ້ເຂົ້າໃນການຈັດຊື້ອຸປະກອນ ແລະ ເຄື່ອງມືປ້ອງກັນໂຄວິດ-19 ໃຫ້ທຸລະກິດ SME ທີ່ໄດ້ຮັບຜົນກະທົບຈາກໂຄວິດ-19.

3) ສົມທົບກັບທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນກ່ຽວຂ້ອງ ຄົ້ນຄ້ວາຄວາມເປັນໄປໄດ້ໃນການສ້າງກົນໄກຄ້ຳປະກັນສິນເຊື່ອ, ລວມທັງການສຶກສາ-ອອກແບບລະບົບການຄ້ຳປະກັນສິນເຊື່ອ ທີ່ມີຄວາມເໝາະສົມ ຊຶ່ງອາດຈະເປັນຮູບແບບການຮ່ວມມືລັດ ກັບທຸລະກິດ ຫຼື ຖ້າຈຳເປັນ ລັດຈະຕ້ອງໄດ້ລິເລີ່ມກ່ອນ ເພື່ອເພີ່ມທາງເລືອກໃນການເຂົ້າເຖິງແຫຼ່ງທຶນໃຫ້ MSME. ມາດຕະການນີ້ ຈະໄດ້ເຮັດໄປຄຽງຄູ່ກັບການສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານຄ້ຳປະກັນສິນເຊື່ອ ຊຶ່ງໄດ້ກຳນົດໄວ້ໃນແຜນວຽກຂອງໂຄງການ MSME A2F-ESR ໂດຍການນຳໃຊ້ບ້ວງເງິນສະໜັບສະໜູນທາງດ້ານວິຊາການ 1 ລ້ານໂດລາສະຫະລັດ ທີ່ໄດ້ຂຶ້ນແຜນໄວ້ແລ້ວ.

4) ຊຸກຍູ້ສະຖາບັນການເງິນຈຸລະພາກ 4 ສະຖາບັນ (ບີດີພີ, ເນັກ, ປະຕູຄຳ, ແລະ ໄຊອຸດົມ) ທີ່ໄດ້ຮັບເງິນຈາກກອງທຶນສົ່ງເສີມ SME ລວມມູນຄ່າ 4 ຕື້ກີບ ແລ້ວນັ້ນ ເພື່ອປ່ອຍກູ້ໃຫ້ຈຸນລະວິສາຫະກິດ. ພ້ອມນັ້ນ, ກໍ່ຈະໄດ້ສືບຕໍ່ສະໜອງທຶນຈາກບ້ວງເງິນສະສົມຂອງກອງທຶນສົ່ງເສີມ SME ໃຫ້ສະຖາບັນການເງິນຈຸລະພາກອື່ນໆ ທັງຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທີ່ມີເງື່ອນໄຂ.

5) ສຸມໃສ່ປັບປຸງກົດໝາຍວ່າດ້ວຍການສົ່ງເສີມ SME, ສືບຕໍ່ສ້າງແຜນແມ່ບົດຜະລິດຕະພາບແຫ່ງຊາດ, ແລະ ສືບຕໍ່ສ້າງນະໂຍບາຍສົ່ງເສີມທຸລະກິດໃໝ່ ປະເພດສະຕາດອັບ (Startup) ໃຫ້ສຳເລັດຕາມແຜນທີ່ວາງໄວ້.

**5. ຂໍ້ສະເໜີອື່ນໆ.**

1) ພະນັກງານທີ່ເຮັດວຽກຢູ່ບັນດາໂຮງງານໃຫຍ່ ທີ່ຜະລິດສິນຄ້າຮັບໃຊ້ພາຍໃນ ແລະ ໂຮງງານທີ່ຜະລິດເພື່ອສົ່ງອອກ ຄວນເປັນກຸ່ມບູລິມະສິດທີ່ຕ້ອງສັກວັກແຊັງປ້ອງກັນໂຄວິດ-19 ເພື່ອເຮັດໃຫ້ເສດຖະກິດຂອງປະເທດຍັງສືບຕໍ່ດຳເນີນໄປໄດ້ ເຖິງວ່າຈະໃນຈັງຫວະທີ່ຊ້າ ແຕ່ບໍ່ໃຫ້ຢຸດສະງັກ.

2) ສະເໜີໃຫ້ ຫສນຍ, ຍທຂ, ອຄ ສ້າງເວັບໄຊ ຫຼື Facebook page ສະເພາະໄລຍະການແຜ່ລະບາດຂອງພະຍາດນີ້ ໂດຍສັງລວມເອກະສານແຈ້ງການ ແລະ ຄຳສັ່ງ ຄຳແນະນຳຕ່າງໆ ແຍກຕາມຂະແໜງການ ເພື່ອໃຫ້ອຳນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນຊາບ ແລະ ເປັນບ່ອນອີງທີ່ຖືກຕ້ອງພ້ອມທັງໄດ້ນຳໃຊ້ ເພື່ອຈັດ

ຕັ້ງປະຕິບັດຢ່າງເປັນເອກະພາບ, ນອກນັ້ນ ກໍ່ເປັນການອຳນວຍໃຫ້ພາກທຸລະກິດເຂົ້າເຖິງຂໍ້ມູນຢ່າງສະດວກ, ວ່ອງໄວ, ແລະ ທັນການ.

3) ຫຼຸດລາຄາໄຟຟ້າ 10% ໃຫ້ແກ່ພາກທຸລະກິດ ແລະ ການຜະລິດ ຜ່ອນຜັນການຊຳລະ 2-3 ເດືອນ ຕາມເງື່ອນໄຂຕົວຈິງ; ສຳລັບຄ່ານ້ຳປະປາ ຫຼຸດອາກອນມູນຄ່າເພີ່ມໃນຄ່ານ້ຳປະປາ, ຜ່ອນຜັນການຊຳລະ 2-3 ເດືອນ ຕາມເງື່ອນໄຂຕົວຈິງ;
4) ເປີດກວ້າງຕື່ມ ການຊ່ວຍເຫຼືອໃຫ້ແກ່ປະຊາຊົນ ແລະ ຫົວໜ່ວຍທຸລະກິດເປົ້າໝາຍ, ປັບປຸງຂັ້ນຕອນລະບຽບການກະທັດຮັດ ລວມທັງຂົງເຂດການດຳລົງຊີວິດຂອງປະຊາຊົນ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງທ່ານ ເພື່ອພິຈາລະນາຕາມທາງຄວດ້ວຍ.

**ຮອງລັດຖະມົນຕີ**

**ຫົວໜ້າຄະນະສະເພາະກິດກະຊວງ ອຄ**

ສົມຈິດ ອິນທະມິດ